# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດທີ 3 ກັນຍາ 2017 (9-3-2017)

---

## ຊາຕານ

*ທ່ານເຫັນວ່າ ສັດປລາດ ຫລືຕົວຮ້າຍໃນນິຍາຍ ຊະນິດໃດ ທີ່ເປັນຕົວແທນຄວາມຊົ່ວທີ່ຮ້າຍທີ່ສຸດ?*

**ຈຸດສຳຄັນໃນບົດຮຽນ**: ຊາຕານຕໍ່ສູ້ເຮົາ, ແຕ່ເຮົາສາມາດຢືນຢູ່ໄດ້ໂດຍພຣະເຢຊູ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ພວກເຮົາບໍ່ສາມາດປະຕິເສດວ່າວິນຍານຮ້າຍບໍ່ມີຈິງ. ມັນຢູ່ອ້ອມຮອບເຮົາເຕັມໄປໝົດ ເຣື່ອງຈິງນັ້ນໄດ້ເຂົ້າມາສູ່ຈິດສຳນຶກຂອງຂ້າພະເຈົ້າຢ່າງແຮງ ເມື່ອຂ້າພະເຈົ້າແນມເຫັນກອງເກີບເດັກນ້ອຍ. ຂ້າພະເຈົ້າໄດ້ໄປເບິ່ງສູນທໍຣະມານທີ່ໂຫດຫ້ຽມ ນາຊີ ມີຊື່ວ່າບົວເຈັນວອດ ( Buchenwald ). ຫຼາຍກວ່າ 250,000 ຄົນໄດ້ຖືກຄຸມຂັງທາລຸນຢູ່ທີ່ນັ້ນ ແລະຄິດໄລ່ຢ່າງຕ່ຳ ຜູ້ບໍຣິສຸດຖືກຂ້າຕາຍປະມານ 40 ຫາ 50 ພັນຄົນ. ເຫັນຊຸມນະຣົກນີ້ແລ້ວ, ເປັນພາບສຍົດສຍອງທີ່ສຸດ, ເກີບຂອງເດັກນ້ອຍຕາຍຈຳນວນນັບບໍ່ຖ້ວນໄດ້ຕຳໃຈຂ້າພະເຈົ້າຢ່າງແຮງ, ມັນເປັນເພາະຄວາມໂຫດຫ້ຽມຂອງຜີຮ້າຍຢ່າງແທ້ຈິງ.

ໜ້າເສັຽດາຍ, ວິນຍານຮ້າຍບໍ່ແມ່ນສິ່ງທີ່ເຮົາເຫັນໃນພາບຈິນຕະນາການນັ້ນດອກ. ວິນຍານຮ້າຍບໍ່ມີຕົວຕົນ,ແລະເມື່ອມັນສາມາດເຂົ້າສິງສູ່ໃຈຂອງຄົນແລ້ວ, ຄວາມຊົ່ວຮ້າຍນັ້ນກໍຈະອອກຣິດ ຊີ້ໃຫ້ເຫັນເຖິງຜູ້ຊອກສິງສູ່ນັ້ນຊັດເຈນຄື: ຊາຕານ. ພຣະທັມພຣະນິມິດຊີ້ໃຫ້ເຮົາເຫັນເດັ່ນຊັດວ່າ ຊາຕານຜູ້ນີ້ແມ່ນໃຜກັນແທ້, ແມ່ນຜູ້ຊອກທຳລາຍເຮົານັ້ນເອງ.

ຂອບຄຸນພຣະເຈົ້າ, ພຣະທັມພຣະນິມິດໄດ້ບອກເຖິງຄວາມພ່າຍແພ້ຂອງຊາຕານອີກດ້ວຍ. ໃນບົດຮຽນນີ້, ພວກເຮົາຈະເຫັນຜົນງານທີ່ພຣະຄຣິດໄດ້ຊົງກະທຳເພື່ອເຮົາ ແລະຊ່ວຍໃຫ້ເຮົາຮູ້ວ່າ ເຮົາສາມາດຕໍ່ສູ້ກັບກົນອຸບາຍຂອງຊາຕານໄດ້ຢ່າງໃດ.

**ພຣະຄັມພີກ່າວວ່າຢ່າງໃດ** : ( ເບິ່ງຕາມຂໍ້ 1, 2 ແລະ 3 )

### ສຶກສາພຣະຄັມພີ

**1. <u>ພຣະນິມິດ 12:7-9</u>** :

*7 ຂນະນັ້ນໄດ້ເກີດສົງຄາມຂຶ້ນໃນຟ້າສວັນ ມີຄາເອັນ ກັບເທບບໍຣິວານຂອງຕົນໄດ້ສູ້ຮົບກັບພຍານາກ ພຍານາກ ກັບ*
*ບໍຣິວານຂອງມັນກໍຕໍ່ສູ້. 8 ແຕ່ຝ່າຍພຍານາກບໍ່ອາດຊັຍຊນະໄດ້ ແລະພວກພຍານາກຈຶ່ງບໍ່ມີບ່ອນຢູ່ໃນສວັນຕໍ່ໄປອີກ.*
*9 ພຍານາກໃຫຍ່ ຊຶ່ງເປັນງູແຕ່ດຶກດຳບັນ ທີ່ເຂົາເອີ້ນວ່າ ເດັຽໂບໂລ, ແລະຊາຕານ, ຜູ້ຫລອກລວງມະນຸດທັງໂລກ ກໍຖືກ*
*ຊັດຖິ້ມລົງເສັຽ ພຍານາກກັບບໍຣິວານຂອງມັນ ກໍຖືກຖິ້ມລົງເທິງແຜ່ນດິນໂລກ.*

ພຣະທັມພຣະນິມິດ ແມ່ນຄຳທຳນວາຍຊຶ່ງເຕັມໄປດ້ວຍນິມິດໝາຍ ແລະສັນຍາລັກ, ຊຶ່ງພາໃຫ້ເກີດມີຄວາມເຫັນບໍ່ສອດຄ່ອງກັນບາງຢ່າງໃນການຕີຄວາມໝາຍ. ຂອບຄຸນພຣະເຈົ້າ ນິມິດໝາຍທີ່ທ່ານໂຢຮັນໄດ້ເຫັນເປັນເໝືອນແກ້ວ

ສົດໃສ ທີ່ເປັນກຸນແຈແຫ່ງຄວາມຈິງຫຼາຍລູກ: ພຣະເຈົ້າຍັງຊົງປົກຄອງຢູ່ ພຣະອົງໄດ້ຊົງນຳເອົາການໄຖ່ມາເຖິງທີ່ສຳເຣັດບໍຣິບູນ, ແລະອານາຈັກຕລອດໄປເປັນນິດຂອງພຣະອົງກໍໄດ້ຖືກສ້າງຂຶ້ນຢ່າງໝັ້ນຄົງ. ພຣະນິມິດໄດ້ເປີດເຜີຍພຣະຄຣິດໃນຖານະກະສັດຜູ້ຊົງມີຊັຍຊະນະ.

ຄວາມຈິງອີກຢ່າງໜຶ່ງ ໄດ້ກັບກາຍກະຈ່າງແຈ້ງຂຶ້ນໃນນິມິດຂອງທ່ານໂຢຮັນ ນັ້ນຄືຄວາມພ່າຍແພ້ຂອງຊາຕານ. ພຣະນິມິດ 12 ບັນລະຍາຍເຖິງສົງຄາມຊຶ່ງຊາຕານ, ຮູບຮ່າງພຍານາກໃຫຍ່, ພ່າຍແພ້ໃຫ້ກອງທັບເທວະດາ. ສົງຄາມຄັ້ງນີ້ເກີດຂຶ້ນເມື່ອໃດ? ນັກສຶກສາບາງຄົນເຊື່ອວ່າສົງຄາມເກີດຂຶ້ນເວລາພຣະເຢຊູສະເດັດຂຶ້ນສູ່ສວັນ, ແມ່ນເວລາພຣະບຸດຖືກຮັບຂຶ້ນເມືອເຖິງພຣະເຈົ້າ ແລະເຖິງບັນລັງຂອງພຣະອົງ (ພນມ12:5). ນັກສຶກສາຄົນອື່ນໆເຊື່ອໝັ້ນວ່າສົງຄາມຈະເກີດຂຶ້ນໃນອະນາຄົດ ໂດຍສະເພາະໃນບັ້ນປາຍຂອງ "ຍຸກຍາກລຳບາກ" (days of tribulation). ພວກເຮົາອາດບອກເວລາຂອງສົງຄາມນີ້ຕ່າງກັນ, ແຕ່ພວກເຮົາສາມາດເຂົ້າໃຈແຈ້ງຢູ່ສິ່ງນຶ່ງຄື: ໃນບົດສລຸບ, ຊາຕານເສັຽຊັຍ. ຊາຕານບໍ່ມີສິດຢູ່ໃນສວັນອີກຕໍ່ໄປ, "ບ່ອນທີ່ ພຣະເຢຊູ ຖືກຈັດໃຫ້ປະທັບຢູ່ກ້ຳຂວາຂອງພຣະເຈົ້າ" (ພນມ2:33). ແຕ່ພຍາມານບໍ່ໄດ້ລົງມາໂດຍບໍ່ມີການສູ້ຮົບ. ມັນຍັງຢາກໂຈມຕີເຮົາ. ຊາຕານ ໄດ້ເຮັດທຸກຢ່າງ ເພື່ອຫຼອກລວງໄພ່ພົນຂອງພຣະເຈົ້າຕັ້ງແຕ່ເດີມມາ. ອີງຕາມພຣະເຢຊູກ່າວວ່າ: "ມັນເປັນຜູ້ຂ້າຄົນ ຕັ້ງແຕ່ເດີມມາແລ້ວ ແລະ ບໍ່ໄດ້ຕັ້ງຢູ່ໃນຄວາມຈິງ, ເພາະໃນຕົວມັນບໍ່ມີຄວາມຈິງ ເມື່ອມັນເວົ້າຕົວະ, ມັນກໍເວົ້າຕາມສັນດານຂອງມັນເອງ, ເພາະເປັນຜູ້ເວົ້າຕົວະ ແລະເປັນພໍ່ຂອງການຕົວະ" ( ຢຮ 8:44 ).

ຢ່າໄດ້ຫຼົງຜິດ: ກິຈການຂອງມານແມ່ນເຮັດໃຫ້ເຮົາສັບສົນ, ຕົວະເຮົາ, ຫຼອກລວງເຮົາ, ທັງທຳລາຍຊີວິດ ແລະພລັງຝ່າຍວິນຍານຂອງເຮົາ. ມັນພະຍາຍາມເຮັດໃຫ້ເຮົາເຫັນພາບບິດເບືອນແທນທີ່ຈະເຫັນພາບທີ່ມະນຸດເຫັນດ້ວຍຫົວໃຈຂອງເຮົາ ເພື່ອອຸທິດຖວາຍກຽດ ແລະສັຣເສີນພຣະສງ່າຣາສີແດ່ພຣະຜູ້ສ້າງຂອງເຮົາ.

ຄວາມຈິງທີ່ໜ້າເສັຽດາຍ ແມ່ນພວກເຮົາຫຼົງເຊື່ອຄຳຕົວະຂອງສັດຕຣູເຮົາ ຕາມສັນດານຂອງເຮົາ. ມັນມີເລ້ຫຼ່ຽມ, ພວກເຮົາອາດຕົກເປັນເປົ້າຢ່າງງ່າຍດາຍຖ້າເຮົາບໍ່ຕຽມພ້ອມ. ດັ່ງນັ້ນ ຜູ້ຕິດຕາມພຣະຄຣິດຕ້ອງມີສະຕິລະວັງຕົວຢູ່ສເມີ. ເຮົາຄວນປັກຕາເບິ່ງພຣະເຈົ້າ ແລະພຣະປະສົງຂອງພຣະອົງ ແທນທີ່ຈະປັກຕາເບິ່ງຄວາມປາຖນາຂອງເຮົາ.

| |
|---|
| ***ທ່ານພົບເຫັນຫຼັກຖານການຫຼອກລວງຂອງຊາຕານຢູ່ໃສໃນໂລກນີ້ ?*** |

## 2. <u>ພຣະນິມິດ 12:10</u> :

*10 ແລະຂ້າພະເຈົ້າໄດ້ຍິນສຽງດັງຂຶ້ນໃນສວັນວ່າ,"ບັດນີ້ຄວາມລອດພົ້ນ, ຣິດເດດ, ແລະຣາຊອານາຈັກແຫ່ງພຣະເຈົ້າຂອງເຮົາທັງຫລາຍ ກັບທັງອຳນາດພຣະຄຣິດຂອງພຣະອົງໄດ້ມາເຖິງແລ້ວ ເພາະວ່າຜູ້ທີ່ກ່າວໂທດພວກພີ່ນ້ອງຂອງເຮົາ ຕໍ່ພຣະພັກພຣະເຈົ້າຂອງເຮົາທັງກາງເວັນແລະກາງຄືນ ກໍໄດ້ຖືກຖິ້ມລົງເສັຽແລ້ວ."*

ທ່ານຮູ້ບໍ່ວ່າ "ມານ" ບໍ່ແມ່ນຊື່ຂອງບຸກຄົນ? "ຊາຕານ" ກໍເໝືອນກັນ. ຄຳເຫຼົ່ານີ້ ແມ່ນຂໍ້ຄວາມພັນລະນາເຖິງໜ່ວຍງານວິນຍານຊົ່ວ ສັດຕຣູຂອງເຮົາ.ໃນພາສາກຣີກ, ຄຳວ່າ diabolos ອ້າງເຖິງຄົນໃສ່ຮ້າຍປ້າຍສີ ຫຼືຄົນກ່າວຮ້າຍຜູ້ອື່ນ. ວິນຍານຊົ່ວສືບຕໍ່ກ່າວຕໍ່ສູ້ເຮົາ.

ແທ້ຈິງ ເຮົາເຫັນໃນພຣະນິມິດບົດ 12 ວ່າ ຊາຕານບໍ່ພຽງແຕ່ຊອກຫຼອກລວງເຮົາເທົ່ານັ້ນ, ມັນຍັງຊອກຫາທາງຟ້ອງເຮົາພ້ອມ ດັ່ງທີ່ມັນໄດ້ກ່າວຟ້ອງຄົນອື່ນໆເຕັມໄປທົ່ວພຣະຄັມພີ:

- **ມານຟ້ອງໂຢບ.** ຊາຕານຢືນຢູ່ຕໍ່ໜ້າພຣະເຈົ້າ ແລະຟ້ອງ ໂຢບ ຜູ້ຊອບທັມວ່າບໍ່ໄດ້ມອບໃຈແດ່ພຣະເຈົ້າຢ່າງເລິກເຊິ່ງ. ມັນຍັງໄດ້ກ່າວຫາພຣະເຈົ້າວ່າ ເພາະພຣະອົງໄດ້ຄຸ້ມຄອງຮັກສາລາວຈາກເຫດຮ້າຍຕ່າງໆ ຖ້າບໍ່ດັ່ງນັ້ນລາວກໍຈະບໍ່ສະແດງຄວາມໂຄຣົບຕໍ່ພຣະເຈົ້າຢ່າງຈິງຈັງ.

➢ **ມານຟ້ອງໂຢຊວຍ.** ຊາຂາຣີຢາເຫັນນິມິດທີ່ຊາຕານຢືນຢູ່ກ້ຳຂວາຂອງມະຫາປະໂຣຫິດ, ໂຢຊວຍ, ເພື່ອຟ້ອງເພິ່ນ (ຊາຂາຣີຢາ 3:1).

➢ **ມານຮ້າຍຟ້ອງເຮົາ.** ທ່ານກໍເຄີຍໄດ້ສຳຜັດກັບການຟ້ອງຂອງມັນ. ເຊັ່ນວ່າ *"ທ່ານໄດ້ເຮັດບາບຢ່າງຫຼວງຫຼາຍ." "ທ່ານບໍ່ເປັນຄົນດີພໍ." ຖ້າທ່ານຮັກພຣະເຢຊູແທ້, ທ່ານຄົງບໍ່ຄິດແນວນັ້ນ." "ທ່ານເຄີຍຜິດພາດມາ."*

ຊາຕານບໍ່ປານີ; ມັນຢາກຟ້ອງເຮົາ "ກ່ອນວັນ ແລະຄືນຂອງພຣະເຈົ້າຂອງເຮົາ." ການຟ້ອງຮ້ອງຂອງມັນສາມາດສຽບແທງ, ແຕ່ຢ່າອວ່າຍສາຍຕາຈາກພາບແຫ່ງຄວາມເປັນຈິງທີ່ໃຫຍ່ກວ່າ: ຄຳກ່າວຫາ ມຸສານີ້ໄດ້ຖືກຂັດຖິ້ມລົງແລ້ວ. ເພາະພຣະຄຣິດ, ພວກເຮົາມີທະນາຍ ຜູ້ທີ່ຢືນຢູ່ກັບເຮົາ ກ່າວຕໍ່ສູ້ຄຳຟ້ອງຂອງຊາຕານ.

➢ **ອົງພຣະຜູ້ເປັນເຈົ້າຢືນຢູ່ກັບໂຢຊວຍ.** ໃນນິມິດຂອງ ເຊຂາຣີຢາ, ອົງພຣະຜູ້ເປັນເຈົ້າຕອບຄຳກ່າວຫາຂອງຊາຕານໂດຍເວົ້າວ່າ: "ໂອ ຊາຕານ ອົງພຣະຜູ້ເປັນເຈົ້າຕໍ່ວ່າເຈົ້າ, ພຣະຜູ້ເປັນເຈົ້າຜູ້ໄດ້ເລືອກເມືອງເຢຣູຊາເລັມຊົງຫ້າມເຈົ້າ." (ເຊຂາຣີຢາ 3:2).

➢ **ອົງພຣະຜູ້ເປັນເຈົ້າຢືນຢູ່ກັບເປໂຕ.** ຫຼາຍຊົ່ວໂມງກ່ອນການຖືກຈັບ ແລະການພິພາກສາຂອງພຣະອົງ, ພຣະເຢຊູໄດ້ຊົງກ່າວແກ່ເປໂຕວ່າ: " ຊີໂມນ ຊີໂມນເອີຍ ເບິ່ງແມ, ຊາຕານໄດ້ຂໍເອົາພວກທ່ານໄວ້ ເພື່ອຈະຝັດທ່ອນພວກທ່ານເໝືອນຝັດເຂົ້າເປືອກ. ແຕ່ເຮົາໄດ້ໄຫວ້ວອນສຳລັບທ່ານ ເພື່ອຄວາມເຊື່ອຂອງພວກທ່ານຈະບໍ່ຂາດ" (ລູກາ 22:31-32).

➢ **ອົງພຣະຜູ້ເປັນເຈົ້າຢືນຢູ່ກັບເຮົາ.** ຊາຕານເສັຽຊັຍໂດຍພາຣະກິດຂອງພຣະຄຣິດ, ແລະພຣະຄຣິດຊົງຕໍ່ສູ້ເພື່ອເຮົາ. ພຣະອົງຊົງເປັນທະນາຍຂອງເຮົາ: " ຖ້າຄົນໃດເຮັດຜິດ ພວກເຮົາກໍມີທະນາຍຄວາມ ຄືພຣະເຢຊູຄຣິດຜູ້ຊົງທ່ຽງທັມທີ່ສະຖິດຢູ່ກັບພຣະບິດາ " (1 ໂຢຮັນ 2:1).

ການເຊື່ອຟັງຄຳຕິວະຂອງຊາຕານສາມາດທຳລາຍພລັງຝ່າຍວິນຂອງເຮົາ. ພວກຕ້ອງຮູ້ຈັກຕັກຕິກຂອງສັດຕຣູຂອງເຮົາ, ແລະພວກເຮົາຕ້ອງກັບຄືນຫາຄວາມເຊື່ອອັນແທ້ຈິງຂອງເຮົາ ແລະຄວາມຊອບທັມຊຶ່ງເຮົາໄດ້ຮັບໂດຍທາງພຣະເຢຊູຄຣິດ

***ພວກເຮົາຈະເຂົ້າໃຈບົດບາດຂອງຊາຕານໃນຖານະເປັນຜູ້ກ່າວຟ້ອງເຮົາໄດ້ຢ່າງໃດ ?***

## 3. <u>ພຣະນິມິດ 12:11-12</u> :

*[11] ເຂົາເຫລົ່ານັ້ນໄດ້ຊະນະພຍານາກດ້ວຍພຣະໂລຫິດຂອງພຣະເມສານ້ອຍ ແລະ ເພາະຄຳພະຍານຂອງເຂົາເອງ ເພາະເຖິງແມ່ນວ່າເຂົາຈະຕາຍກໍບໍ່ເສັງດາຍຊີວິດຂອງຕົນ. [12] ເພາະເຫດນັ້ນແຫລະ, ສວັນກັບບັນດາຜູ້ທີ່ຢູ່ໃນສວັນຈົ່ງຊົມຊື່ນຍິນດີ ແຕ່ວິບັດຈະມີແກ່ແຜ່ນດິນໂລກ ແລະນ້ຳທະເລ ເພາະວ່າມານໄດ້ລົງມາຫາເຈົ້າດ້ວຍຄວາມຄຽດແຄ້ນອັນໃຫຍ່ ເພາະວ່າມັນຮູ້ວ່າເວລາຂອງມັນມີໜ້ອຍ."*

ດັ່ງທີ່ພວກເຮົາໄດ້ເຫັນແລ້ວວ່າ ຊາຕານບໍ່ປານີໃນກົນອຸບາຍ ແລະ ການຟ້ອງຮ້ອງຂອງມັນ. ສິ່ງນັ້ນ ອາດຮູ້ສຶກວ່າໜັກເກີນກວ່າຈະຮັບໄດ້ເມື່ອຈຳໄດ້ວ່າມັນມີອຳນາດຫຼາຍພຽງໃດ. ແຕ່ຢ່າຕົກໃຈ! ຊາຕານອາດມີອຳນາດ, ແຕ່ພຣະເຈົ້າຊົງມີຣິດອຳນາດເໜືອທຸກຢ່າງ. ຊາຕານແມ່ນສິ່ງຊົງສ້າງຊຶ່ງມີຂີດຄວາມຈຳກັດ. ມັນບໍ່ທຽບທັນກັບພຣະເຈົ້າໄດ້ແນ່ນອນ. ສິ່ງປະເສີດເໜືອກວ່າທຸກສິ່ງຄື: ມັນປຣາຊັຍແລ້ວ!

ພຣະພອນຈາກຂ່າວປະເສີດຢ່າງໜຶ່ງແມ່ນ ພວກເຮົາບໍ່ຈຳເປັນເອົາຊນະຊາຕານເລີຍ; ພວກເຮົາພຽງແຕ່ຢືນຢູ່ໃນຊັຍຊນະທີ່ເຮົາໄດ້ຮັບໂດຍທາງພຣະເຢຊູເທົ່ານັ້ນ. ຈົ່ງມອງເບິ່ງກາງແຂນ, ພຣະເຢຊູຊົງຕັສວ່າ: " ບັດນີ້ເຖິງເວລາພິພາກສາໂລກນີ້ ບັດນີ້ຜູ້ປົກຄອງໂລກນີ້ຈະຖືກກຳຈັດອອກເສັຽ. ຝ່າຍເຮົາ ເມື່ອຖືກຍົກຂຶ້ນຈາກແຜ່ນດິນໂລກແລ້ວເຮົາກໍຈະຊັກນຳຄົນທັງຫຼາຍມາຫາເຮົາ" (ຢຮ 12:31-32). ຊັຍຊນະຂອງເຮົາຖືກຮັບປະກັນແລ້ວເພາະວ່າ, ຫຼັງຈາກພຣະອົງຊົງສິ້ນພຣະຊົນ, ພຣະເຢຊູຊົງສະເດັດອອກຈາກອຸໂມງ. ການໄຖ່ຂອງເຮົາແລະຄວາມສັມພັນຂອງເຮົາກັບຜູ້ຊະນະຖືກຮັກສາໄວ້ຢ່າງປອດພັຍ ຕລອດໄປເປັນນິດ.

"ໃຜອາດຈະຟ້ອງຄົນທັງຫຼາຍທີ່ພຣະເຈົ້າຊົງເລືອກໄວ້ແລ້ວ ພຣະເຈົ້າໄດ້ຊົງປົດປ່ອຍເຂົາແລ້ວ. ໃຜຈະເປັນຜູ້ລົງໂທດອີກ ພຣະເຢຊູຄຣິດໄດ້ຊົງສິ້ນພຣະຊົນແລ້ວ ພຣະອົງຊົງສະຖິດຢູ່ກ້ຳພຣະຫັດຂວາຂອງພຣະເຈົ້າ ພຣະອົງນັ້ນແຫຼະ, ຊົງອ້ອນວອນເພື່ອເຮົາທັງຫຼາຍດ້ວຍ" (ໂຣມ 8:33-34).

ອີງຕາມພຣະນິມິດ ບົດ 12, ຊາຕານ "ຮູ້ດີວ່າເວລາຂອງມັນມີໜ້ອຍ. " ດ້ວຍເຫດນີ້ມັນຈຶ່ງເຝົ້າທຳລາຍເຮົາ ແລະດ້ວຍເຫດນີ້ເຮົາຕ້ອງເຝົ້າລະວັງຢູ່. ຊາຕານເຝົ້າຈະທຳລາຍ, ແຕ່ພວກເຮົາສາມາດຕໍ່ສູ້ກັບມັນໄດ້ ດ້ວຍການຍົກພຣະເຢຊູຂຶ້ນໃນຊີວິດຂອງເຮົາ ແລະຕາຍຕໍ່ຊີວິດເກົ່າຂອງເຮົາ. ບໍ່ມີຄວາມມືດມິດ; ບໍ່ມີການຈຳຈອງອີກຕໍ່ໄປ. ພຣະເຢຊູຊົງກ່າວວ່າ: " ເຮົານີ້ແຫຼະ ເປັນຄວາມສວ່າງຂອງໂລກ ຜູ້ທີ່ຕາມເຮົາມາຈະບໍ່ຫຍ່ອໄປໃນທີ່ມືດ ແຕ່ຈະມີຄວາມສວ່າງແຫ່ງຊີວິດ" (ຢຮ 8:12). ພວກເຮົາມາດຢືນຕໍ່ສູ້ຊາຕານໄດ້ ເພາະວ່າເຮົາສາມາດຢືນຢັດຢູ່ໃນພຣະຄຣິດ. .

| ***ມີທາງໃດແດ່ທີ່ ເຮົາສາມາດປ້ອງກັນ ການຟ້ອງຂອງຊາຕານ ?*** |
|---|

## ນຳໃຊ້ໃນຊີວິດ

ພວກເຮົາສາມາດເອົາຊະນະຊາຕານ ໂດຍທາງພຣະເຢຊູ. ທ່ານຈະເຮັດຫຍັງໃນອາທິດນີ້ ເພື່ອກ້າວເດີນໄປໃນຊັຍຊະນະນັ້ນ?

- **ສາຣະພາບ.** ອວ່າຍໜີຈາກຄວາມບາບ ແລະຢ່າປ່ອຍຊ່ອງວ່າງໃຫ້ຊາຕານຟ້ອງໃນຊີວິດຂອງທ່ານໄດ້. ຈົ່ງວາງຄວາມເຊື່ອຂອງທ່ານໄວ້ໃນພຣະຄຣິດເພື່ອການອະພັຍ ແລະເພື່ອອິສຣະພາບ.
- **ຈົ່ງອ່ານ.** ຈົ່ງອ່ານພຣະທັມແຕ່ລະວັນໃຫ້ເປັນນິສັຍ. ຈົ່ງໃຫ້ຄວາມຈິງໃນພຣະຄຳເຂົ້າໄປໃນສມອງຂອງທ່ານແທນທີ່ຈະໃຫ້ຄຳຫຼອກລວງ ແລະ ຄຳຕິວະຂອງຊາຕານເຂົ້າໄປ. ທົດສອບທຸກຄວາມຄິດ ເບິ່ງວ່າມັນຕໍ່ສູ້ກັບຄວາມຈິງຂອງພຣະຄຣິດໃນພຣະຄຳຂອງພຣະອົງຫຼືບໍ່.
- **ຈົ່ງເວົ້າ.** ເວລາທ່ານເຫັນຄົນອື່ນດຳຣົງຊີວິດໃນຄວາມຜິດພາດຍ້ອນຄຳຕົວະຂອງຊາຕານ, ຈົ່ງຊີ້ໃສ່ຊັຍຊະນະທີ່ເຂົາສາມາດມີໃນພຣະຄຣິດ. ນຳເຂົາໃຫ້ໂອບກອດເອົາຄວາມຈິງ ແລະກ້າວເດີນໄປໃນຊັຍຊະນະ.

ຢ່າໄດ້ຕົກໄປໃນຫລຸມພາງຂອງການເຊື່ອ ວ່າວິນຍານຮ້າຍບໍ່ມີຈິງ ຫຼືເຊື່ອວ່າວິນຍານຮ້າຍພຽງແຕ່ເປັນຜົນສະທ້ອນຕໍ່ໂລກໃນບ່ອນຫ່າງໄກພຸ້ນເທົ່ານັ້ນ. ຊາຕານເປັນພັຍອັນຕະລາຍຕໍ່ຄົນຂອງພຣະເຈົ້າຢ່າງແຈ່ມແຈ້ງ ແລະມີຢູ່ດຽວນີ້. ຂອບຄຸນພຣະເຈົ້າ, ໃນຖານະທີ່ເຮົາເປັນຄົນຂອງພຣະເຈົ້າ ໝາຍຄວາມວ່າພວກເຮົາສາມາດທວງເອົາຊັຍຊະນະທີ່ພຣະອົງຊະນະແລ້ວ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**